# ບົດທີ 22

# ບາລະນາບາ - ຜູ້ມີໃຈອຸດໜຸນ




**1** ບາງຄົນມີທັງຊື່ມີທັງນາມສາຍາອີກດ້ວຍ ນາມສາຍານັ້ນອາດຈະສະແດງລັກສະນະຂອງຜູ້ກ່ຽວ. ໃນ ກຈກ 4:36 ມີລູກ ສິດຄົນໜຶ່ງທີ່ມີຊື່ໂຢເຊັບ ທີ່ມີນາມສາຍາອີກວ່າ ບາລະນາບາ

ກ. ພວກອັກຄະສາວົກເອີ້ນຜູ້ນັ້ນວ່າຢ່າງໃດ? ______________________________

ຂ. ແປວ່າຫຍັງ? ______________________________________________

**2** ຜູ້ທີ່ເອີ້ນວ່າ ຜູ້ມີໃຈອຸດໜຸນຈະເປັນຄົນທີ່ມີທ່າທີຢ່າງໃດຕໍ່ຜູ້ອື່ນ? __________________

**3** ກ. ຕາມໃນ ກຈກ 4:36 ເຫັນວ່າເພິ່ນເປັນໄທເກາະໃດ? ________________ . ປະຊາຊົນໃນເກາະກຸບໂລສ່ວນຫຼາຍບໍ່ແມ່ນຊາດຢິວ ແຕ່ໃນຂໍ້ດຽວນັ້ນມີຫຼັກຖານວ່າເພິ່ນເປັນຄົນຢິວ.

ຂ. ບາລະນາບາເປັນຄົນພວກໃດ? (ເລືອກ)

______ ຟາລີຊາຍ ______ ເລວີ ______ ຊາດູກາຍ

**4** ພວກເລວີເປັນຕະກຸນໜຶ່ງໃນ 12 ຕະກຸນຂອງອິດສະລາເອນ. ໂມເຊເປັນຂອງຕະກຸນເລວີນັ້ນ. ເຂົາຮັບພາລະເປັນຜູ້ທີ່ ບໍລິການໃນພະວິຫານ ເຫັນວ່າບາລະນາບານັ້ນເປັນຊາດຢິວທີ່ມາຈາກເກາະກຸບໂລ ເພິ່ນມີລັກສະນະຢ່າງໃດ? ______________________________

**5** ຕໍ່ໄປນີ້ ເຮົາຈະສຶກສາເລື່ອງເຫດການ 4 ປະການໃນພະທຳກິດຈະການທີ່ເພິ່ນໜູນໃຈໝູ່. ໃຫ້ອ່ານ ກິດຈະການ 9:26-28 ຮູບໃດຢູ່ໜ້າປົກ ບົດທີ 22 ນີ້ ສະແດງ ເຖິງ ກຈກ 9:26-28 ນັ້ນ?

______________________________________________________

**6** ໃນກຈກ 9:20 ໂຊໂລພັກຢູ່ກັບພວກລູກສິດໃນເມືອງໃດ? ________________________

**7** ຕໍ່ໄປໂຊໂລຕ້ອງອອກຈາກເມືອງດາມາເຊ. ເພິ່ນພະຍາຍາມເຂົ້າສະ ນິດສະໜົມກັບພວກລູກສິດໃນບ່ອນໃດ? (ກຈກ 9:26) ____________________________________________

**8** ພວກລູກສິດໃນກຸງເຢລູຊາເລັມ ຕ້ອນຮັບໂຊໂລຢ່າງໃດ? (ເລືອກ)

ກ. ______ ເຂົາຕັ້ງເພິ່ນໄວ້ເປັນອັກຄະສາວົກທັນທີ

ຂ. ______ ເຂົາບໍ່ຢາກຕ້ອນຮັບ

ຄ. ______ ຕ້ອນຮັບເພິ່ນເຂົ້າເປັນສະມາຊິກ

**9** ເຂົາບໍ່ຢາກຕ້ອນຮັບເພາະຫຍັງ? ________________________________________

**10** ໂຊໂລເປັນຄຣິດສະຕຽນໃໝ່ ເພິ່ນຮ່ວມສາມັກຄີກັບອານາເນຍແລະພີ່ນ້ອງຄຣິດສະຕຽນໃນເມືອງດາມາເຊ ແຕ່ມາເຖິງ ຄຣິດສະຕະຈັກໃນກຸງເຢລູຊາເລັມແລ້ວເຂົາບໍ່ຢາກຮັບ.

ໃຫ້ອ່ານ ກຈກ 9:27

ກ. ແມ່ນໃຜມາແກ້ບັນຫາໃຫ້? ________________________________________

ຂ. ເພິ່ນພາໂຊໂລໄປຫາໃຜ? __________________________________________

ຄ. ເລົ່າເລື່ອງທີ່ໂຊໂລເຫັນໃຜ? ________________________________________

ງ. ບອກວ່າໂຊໂລປະກາດໃນເມືອງດາມາເຊຢ່າງໃດ? __________________________

**11** ບາລະນາບາອຸດໜຸນໃຈໂຊໂລໂດຍເຮັດຫຍັງ? (ເລືອກ)

ກ. ______ ພາເພິ່ນໄປຫາພວກຄຣິດສະຕະຈັກ

ຂ. ______ ຊິງໄປຄຣິດສະຕະຈັກອື່ນ

ຄ. ______ ຕັ້ງຄຣິດສະຕະຈັກໃໝ່ໄວ້

**12** ສິ່ງທີ່ບາລະນາບາເຮັດເປັນສິ່ງທີ່ງ່າຍຫຼາຍ ແຕ່ຖ້າເພິ່ນບໍ່ໄດ້ພາໂຊໂລໄປຫາພວກອັກຄະສາວົກ ເຂົາອາດຈະບໍ່ຕ້ອນຮັບ ໂຊໂລຈັກເທື່ອ ແລ້ວຈະເປັນການທີ່ເສຍດາຍໃນຊີວິດຂອງໂຊໂລ ໃນ ຄຣິດສະຕະຈັກກຸງເຢລູຊາເລັມ ແລະ ຄຣິດສະຕະຈັກທົ່ວໂລກ.

ບາລະນາບາເຮັດຫຍັງຈຶ່ງໜຸນໃຈໂຊໂລ? (ຕື່ມຄວາມຂາດ)

ພາໄປຫາພວກ _________________ ໃນ _________________ ກຸງ _______________

**13** ຍັງມີເທື່ອທີສອງທີ່ບາລະນາບາອຸດໜຸນພວກພີ່ນ້ອງ. ໃຫ້ອ່ານ ກຈກ 11:19-24

ກ. ແມ່ນຊາດໃດທີ່ຮັບຟັງພະທຳເປັນເທື່ອທຳອິດໃນເມືອງອັນຕີໂອເຂຍ? _____________

ຂ. ແຕ່ເລື່ອງນັ້ນ ຄຶດສະຕະຈັກໃນກຸງເຢລູຊາເລັມບໍ່ຮັບຮູ້. ສ່ວນຫຼາຍເຂົາເຊື່ອວ່າຄົນໃດທີ່ຈະເປັນຄຶດສະຕຽນຕ້ອງຮັບພິ ທີຕັດແລະເຂົ້າສາດສະໜາຢິວກ່ອນ (ຢ່າງໄທເອທີໂອເປຍ) ຕໍ່ໄປຈຶ່ງຈະເຂົ້າເປັນຄຶດສະຕຽນໄດ້. ຖ້າຢ່າງ ນັ້ນ ຄຶດສະຕຽນຊາວຢິວໃນກຸງເຢລູຊາເລັມຈະຮັບຄຶດສະຕຽນຕ່າງຊາດໃນເມືອງອັນຕີໂອເຂຍຢ່າງໃດ? (ເລືອກ)

______ ເຂົາຈະຮັບໂລດ

______ ເຂົາຈະຮັບແຕ່ສະເພາະຄົນທີ່ຮັບບັບຕິສະມາກ່ອນ

______ ເຂົາຈະບໍ່ຮັບ

ຄ. ຄຶດສະຕະຈັກໃນກຸງເຢລູຊາເລັມໃຊ້ໃຜໄປສືບສວນເລື່ອງນັ້ນໃນເມືອງອັນຕີໂອເຂຍ? __

**14** ສ່ວນພວກລູກສິດໃນກຸງເຢລູຊາເລັມສະໄໝນັ້ນ ເຂົາຖືວ່າຄົນຕ່າງຊາດຈະຕ້ອງເຮັດຢ່າງໃດຈຶ່ງຈະເປັນຄຶດສະຕຽນ ໄດ້? (ເລືອກ)

ກ. ______ ມີແຕ່ເຊື່ອໄວ້ວາງໃຈໃນພະເຢຊູ

ຂ. ______ ເຊື່ອໃນພະເຢຊູແລະເອົາຈົດໝາຍມາຈາກສານສູງສຸດໃນກຸງເຢລູຊາເລັມ.

ຄ. ______ ຖືສາດສະໜາໃດກໍໄດ້ໂດຍມີໃຈຊື່ສັດ

ງ. ______ ຮັບພິທີຕັດຕາມສາດສະໜາຢິວ ແລ້ວເຊື່ອໃນພະເຢຊູດ້ວຍ.

**15** ກ. ບາລະນາບາ ຖືວ່າຈະຕ້ອງເຮັດຫຍັງຈຶ່ງຈະເປັນຄຶດສະຕຽນໄດ້? ________________

ຂ. ຮູບໃດຢູ່ໜ້າປົກບົດນີ້ທີ່ສະແດງເຖິງການນີ້? ______________________________

**16** ບາລະນາບາໜຸນໃຈຄຶດສະຕຽນໃໝ່ໃນອັນຕີໂອເຂຍໂດຍເຮັດຫຍັງ? (ເລືອກ)

ກ. ______ ຮັບຮູ້ວ່າເຂົາເປັນຢິວ

ຂ. ______ ບໍ່ຮັບຮູ້ວ່າເຂົາເປັນຄຶດສະຕຽນ

ຄ. ______ ຮັບຮູ້ວ່າເຂົາເປັນຄຶດສະຕຽນ

**17** ເປັນຫຍັງບາລະນາບາຍອມຮັບວ່າເຂົາເປັນຄຶດສະຕຽນຕາມໃນ ກຈກ 11:23? (ເລືອກ)

ກ. ______ ເພາະເປັນຄົນຕ່າງຊາດ

ຂ. ______ ເພາະເຫັນພະຄຸນທີ່ພະເຈົ້າຊົງໂຜດ

ຄ. ______ ເພາະເຂົາຕັ້ງໃຈໝັ້ນຄົງແລ້ວ

**18** ບາລະນາບາເຫັນພະຄຸນທີ່ພະເຈົ້າຊົງໂຜດເຂົາ ເພິ່ນຈຶ່ງຮັບຮູ້ວ່າເຂົາເປັນລູກສິດຂອງພະເຢຊູເຖິງວ່າເຂົາບໍ່ໄດ້ຮັບ ພິທີ ໃດ? ________________________________________

**19** ກ. ບາລະນາບາອຸດໜຸນໂຊໂລຢ່າງໃດ? ____________________________________

________________________________________________________________

ຂ. ອຸດໜຸນຄຶດສະຕຽນໃໝ່ຕ່າງຊາດໃນເມືອງອັນຕີໂອເຂຍຢ່າງໃດ? _______________

________________________________________________________________

ຄ. ຊື່ "ບາລະນາບາ" ນັ້ນແປວ່າຢ່າງໃດ? ____________________________________

**20** ໃນທັງສອງເທື່ອນັ້ນ ມີຄຼິດສະຕຽນທີ່ມາເຊື່ອໃໝ່ຊຶ່ງຄຼິດສະຕຽນເກົ່າບໍ່ຮັບເອົາ. ທັງສອງເທື່ອບາລະນາບາອຸດໜຸນ ເຂົາ ພໍດີໃນເວລາທີ່ເໝາະສົມ. ໃນແຕ່ລະຂໍ້ຕໍ່ໄປນີ້ໃຫ້ທ່ານຂີດໝາຍຄົນທີ່ອາດຈະຕ້ອງການຄວາມໜຸນໃຈຈາກ ທ່ານ. (ເລືອກ)

ກ. ______ ຄົນຕິດຢາທີ່ຫາກໍ່ເຊື່ອໃນພະເຢຊູ

ຂ. ______ ຄົນທີ່ຮັບເຊື່ອພະເຢຊູ ເມື່ອເປັນນັກໂທດໃນຄຸກ

ຄ. ______ ຄົນທີ່ໜ້າອາຍບໍ່ມີເພື່ອນ

ງ. ______ ຄຼິດສະຕຽນທີ່ຕັ້ງໝັ້ນຄົງມາຫຼາຍປີ

ຈ. ______ ຄອບຄົວທີ່ຫາກໍ່ຍ້າຍມາ

ສ. ______ ຄົນທີ່ເຂົ້າໃນຄຼິດສະຕະຈັກໃນເທື່ອທໍາອິດ

ຊ. ______ ເຖົ້າແກ່ຜູ້ປົກຄອງຄຼິດສະຕະຈັກ

ຍ. ______ ຄົນທີ່ຮັບເຊື່ອໃນຕ່າງປະເທດມາ

ດ. ______ ຄົນທີ່ເປັນໂລກທີ່ບໍ່ຢາກມາປະຊຸມ



**21** ທ່າທີໃດຕໍ່ໄປນີ້ ເປັນທ່າທີຂອງບາລະນາບາທີ່ເປັນຜູ້ມີໃຈອຸດໜຸນ? (ເລືອກ)

ກ. ______ ພາເຂົາໄປຫາຜູ້ນໍາແລະສະມາຊິກ

ຂ. ______ ປະເຂົາໄວ້ຄາວໜຶ່ງເພື່ອລອງເບິ່ງວ່າ ເຂົາຈະຕັ້ງໝັ້ນ ຫຼືບໍ່.

ຄ. ______ ເຊີນໃຫ້ເຂົາມາງານລ້ຽງປະຈໍາທີ່ປະຊຸມ

ງ. ______ ຖ້າບໍ່ແມ່ນພາສາດຽວກັນກັບເຮົາ ບໍ່ຕ້ອງຖືວ່າເປັນພີ່ນ້ອງ

ຈ. ______ ສວຍໂອກາດສົນທະນາກັບເຂົາ

ສ. ______ ສົນທະນາກັບໝູ່ເລື່ອງທີ່ຄົນໃໝ່ຈະບໍ່ສົນໃຈ

**22** ຕໍ່ໄປນີ້ ຈະສຶກສາກ່ຽວກັບເຫດການທີສາມ ທີ່ບາລະນາບາອຸດໜຸນຜູ້ອື່ນ. ໃຫ້ອ່ານ ກຈກ 11:24-26 ຄົນທີ່ເຂົ້າມາຢູ່ຝ່າຍພະເຢຊູໃນເມືອງອັນຕີໂອເຂຍມີຫຼາຍປານໃດ? (ບໍ່ບອກຈໍານວນຕາຍຕົວ) ____________________________________________

**23** ຂ່າວປະເສີດຂອງພະເຢຊູແຜ່ອອກໄປຫຼາຍແທ້. ຄົນຕ່າງຊາດທີ່ບໍ່ເຄີຍຮູ້ເລື່ອງພະທໍາຂອງພະອົງກ່ອນ ໄດ້ເຂົ້າມາເປັນ ຄຼິດສະຕຽນຫຼາຍສົມຄວນ. ຜູ້ໃດຈະເປັນຜູ້ນໍາໃນການປະກາດຕໍ່ຄົນຕ່າງຊາດນີ້! ມີແຕ່ຄົນທີ່ມີເງື່ອນໄຂດັ່ງຕໍ່ໄປນີ້:

- ເຄີຍເປັນຜູ້ຕ່າງໜ້າອັກຄະສາວົກໃນກຸງເຢລູຊາເລັມ
- ພວກສາວົກໃຫ້ອໍານາດແກ້ບັນຫາໃນອັນຕີໂອເຂຍ
- ຄຼິດສະຕະຈັກໃນອັນຕີໂອເຂຍນິຍົມເພິ່ນເພາະເພິ່ນກ້າຮັບຄຼິດສະຕຽນຕ່າງຊາດທີ່ບໍ່ໄດ້ຮັບພິທີຕັດກ່ອນ.

ຜູ້ທີ່ມີເງື່ອນໄຂດັ່ງນັ້ນຄືໃຜ? ____________________________________________

*ແຕ່ບາລະນາບາ ບໍ່ໄດ້ຮັບພາລະນັ້ນ!*

**24** ກ. ໃນ ກຈກ 11:25 ບາລະນາບາເຮັດຫຍັງ? ______________________________

ຂ. ຮູບໃດຢູ່ໜ້າປົກບົດທີ 22 ນີ້ ທີ່ສະແດງເຖິງການນັ້ນ? ________________________

ຄ. ໃນທີ່ສຸດມີສອງຄົນໃດທີ່ສອນຄຼິດສະຕຽນໃໝ່ໃນເມືອງອັນຕີໂອເຂຍ?

__________________________ ແລະ __________________________

**25** ແທນທີ່ຈະຕັ້ງຕົວຂຶ້ນເປັນຄົນເອກໃນການປ່າວປະກາດພະທຳຕໍ່ຄົນຕ່າງຊາດ ບາລະນາບາໄປຫາໂຊໂລ. ບາລະນາ ບາເປີດໂອກາດໃຫ້ໂຊໂລຮ່ວມໃນການປ່າວປະກາດ. ເປັນຫຍັງບາລະນາບາຈຶ່ງເຮັດຢ່າງນັ້ນ? (ເລືອກ)

ກ. _____ ເພື່ອເປີດໂອກາດໃຫ້ໂຊໂລມີປະສົບການໃນວຽກງານຂອງພະເຈົ້າ

ຂ. _____ ບາລະນາບາບໍ່ຢາກມີວຽກຫຼາຍປານນັ້ນ

ຄ. _____ ບາລະນາບາຂີ້ຄ້ານ

**26** ບາລະນາບາອຸດໜຸນໂຊໂລຢ່າງໃດ? (ຕື່ມຄວາມທີ່ຂາດ)

ບາລະນາບາເປີດ ____________ ໃຫ້ໂຊໂລໄດ້ ____________ ໃນວຽກຂອງພະເຈົ້າ.

**27** ບາລະນາບາໜຸນໃຈໂຊໂລໃນສອງດ້ານໃດ?

ກ. ກ່ຽວກັບພວກອັກຄະສາວົກໃນກຸງເຢລູຊາເລັມ __________________________

ຂ. ກ່ຽວກັບການສອນຄຼິດສະຕຽນໃໝ່ໃນເມືອງອັນຕີໂອເຂຍ ____________________

______________________________________________________________

**28** ໃຫ້ທ່ານອ່ານຂໍ້ພະຄຳພີຕໍ່ໄປນີ້ ແລະຂຽນຊື່ຄົນທີ່ປາກົດມາໃນຂໍ້ນັ້ນຕາມລຳດັບທີ່ສະເໜີໃນພະຄຳພີ.

ກ. ກຈກ 11:30 ______________________ ກັບ ______________________

ຂ. ກຈກ 13:2 _______________________ ກັບ ______________________

ຄ. ກຈກ 13:7 ຜູ້ປົກຄອງຊື່ເຊກີໂອໂປໂລ... ເອີ້ນເອົາ ___________ ກັບ __________

ງ. ກຈກ 13:9 ແຕ່ ______________ ຜູ້ມີຊື່ອີກວ່າ ______________________

(ເປັນຜູ້ທີ່ເຕືອນໝໍເວດມົນ)

ຈ. ກຈກ 13:13 __________________ ກັບພວກ ________________________

(ເດີນທາງຈາກເມືອງປາໂຟໄປຍັງເມືອງເປເຄ)

ສ. ກຈກ 13:16 ________________ ຢືນຂຶ້ນກ່າວພະທຳ.

ຊ. ກຈກ 13:43 ຄົນຕິດຕາມ ___________________ ແລະ __________________

**29** ຕາມລຳດັບຊື່ທີ່ທ່ານຍົກມາໃນຄຳຖາມ 28 ນັ້ນ

ກ. ໃນປີທີ່ເຂົາທັງສອງຢູ່ສອນໃນເມືອງອັນຕີໂອເຂຍແລະໃນເມື່ອເລີ້ມຕົ້ນເດີນທາງໄປປ່າວປະກາດມາເຖິງ ກຈກ 13:7 ຊື່ຂອງຜູ້ໃດປາກົດຂຶ້ນກ່ອນ? ______________________

ຂ. ຕໍ່ໄປ ແມ່ນຊື່ຂອງໃຜປາກົດມາຫຼາຍກວ່າ? _____________________________

**30** ກ. ເບິ່ງຄືວ່າ ໃນປີທີ່ເຂົາທັງສອງຢູ່ອັນຕີໂອເຂຍ ແລະໃນເວລາເຂົາຕັ້ງຕົ້ນເດີນທາງໄປປ່າວປະກາດ ຄົນໃດ ເປັນຜູ້ນຳ? ______________________________________________

ຂ. ຕໍ່ໄປ (ຫຼັງຈາກ ກຈກ 13:13) ໃຜເຂົ້າເປັນຜູ້ນຳ? ____________________________

**31** ຕາມລັກສະນະຂອງຜູ້ມີໃຈອຸດໜູນ ບາລະນາບາໄປຊອກຫາໂຊໂລຈາກຕາໂຊ ນຳມາອັນຕີໂອເຂຍເພື່ອເປີດ ____________ ໃຫ້ເພິ່ນໄດ້ປະ ___________ ໃນວຽກງານຂອງພະເຈົ້າ. ບາລະນາບາສັງເກດວ່າໂຊໂລຈະ ມີຄວາມ ສາມາດທີ່ຈະຮັບໃຊ້ພະເຈົ້າໃນອະນາຄົດ. (ຕື່ມ)

**32** ຕໍ່ໄປພະເຈົ້າໃຊ້ໂຊໂລຫຼາຍໃນການປະກາດພະທຳແກ່ຄົນຕ່າງຊາດເປັນຕົ້ນ. ຖ້າບາລະນາບາຈະຄິດເຫັນແຕ່ໃຈຕົວ ເອງ ເພິ່ນອາດຈະຖືກການທົດລອງຢ່າງໃດ? (ເລືອກ)

ກ. ______ ໃຫ້ເປັນຜູ້ນຳເອງ ແທນທີ່ຈະອຸດໜູນໃຫ້ໂຊໂລເປັນຜູ້ນຳ.

ຂ. ______ ທົດລອງຖ່ອມຕົວລົງ

ຄ. ______ ທົດລອງບໍ່ໃຫ້ປະກາດພະທຳ

**33** ໃນແຕ່ລະທີ່ປະຊຸມ ອາດຈະມີຫຼາຍຄົນທີ່ຢາກເປັນນາຍ ແຕ່ບາລະນາບາຍອມມອບຕຳແໜ່ງເປັນຜູ້ນຳໃຫ້ໂຊໂລ. ໃນ ແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານຂີດຂ້າອອກທີ່ກ່າວເລື່ອງຄົນທີ່ບໍ່ມີໃຈອຸດໜູນຜູ້ອື່ນ:

ກ. ຜູ້ນຳຊາວໜຸ່ມທີ່ຕິວ່າບໍ່ມີຜູ້ອື່ນທີ່ເປັນຜູ້ນຳໄດ້.

ຂ. ເຖົ້າແກ່ທີ່ຢາກເປັນປະທານຄະນະກຳມະການທຸກເທື່ອທີ່ຈະປະຊຸມກັນ ຢ້ານວ່າຜູ້ອື່ນຈະໄດ້ອິດທິພົນ.

ຄ. ຜູ້ນຳທີ່ສອນໃຫ້ຜູ້ຊ່ວຍຮູ້ເລື່ອງວຽກງານທຸກປະການເພື່ອວ່າຖ້າຕົວເອງຕາຍໄປແລ້ວ ຜູ້ຊ່ວຍຈະຮູ້ເຮັດໝົດ.

ງ. ຜູ້ນຳສາດສະໜາທີ່ບໍ່ຢາກໃຫ້ລູກນ້ອງອ່ານພະຄຳພີ ຢ້ານວ່າເຂົາຈະຮູ້ຫຼາຍເກີນໄປ.

**34** ປະການໃດຕໍ່ໄປນີ້ມີຜົນຮັບວ່າ ເຮົາບໍ່ຢາກມອບສິດໄວ້ກັບຄົນອື່ນ? (ເລືອກ)

ກ. ______ ຢາກມີອຳນາດແລະອິດທິພົນ

ຂ. ______ ຢາກມີຊື່ສຽງ

ຄ. ______ ຢາກຍົກກຽດໃຫ້ພະເຢຊູ

ງ. ______ ຢາກໄດ້ດີ

*ແຕ່ພວກເຮົາຄວນຮຽນຮູ້ວິທີອຸດໜູນຜູ້ອື່ນເໝືອນຢ່າງບາລະນາບາ*

**35** ກ. ບາລະນາບາອຸດໜູນໂຊໂລໃນເມືອງອັນຕີໂອເຂຍໂດຍເປີດຫຍັງ? _______________

_________________________________________________________________

ຂ. ບາລະນາບາຕ້ອງຕໍ່ສູ້ການທົດລອງຢ່າງໃດ ກ່ອນທີ່ຈະອຸດໜູນໂຊໂລຢ່າງນັ້ນ? ການທົດລອງທີ່ຈະເປັນ ______________ ແທນທີ່ຈະອຸດໜູນຜູ້ອື່ນ. (ຕື່ມຄວາມ)

**36** ກ. ບາລະນາບາອຸດໜູນຄົນຕ່າງຊາດທີ່ເຂົ້າມາເປັນຄຼິດສະຕຽນໃໝ່ຢ່າງໃດ? __________

______________________________________________________________

ຂ. ເພິ່ນອຸດໜູນໂຊໂລໃນສອງດ້ານໃດ?

______________________________________________________________

______________________________________________________________

ຄ. ເພິ່ນຈະຕ້ອງຕໍ່ສູ້ການທົດລອງຢ່າງໃດ ເພື່ອຈະມີໃຈອຸດໜູນໂຊໂລ?

______________________________________________________________

ງ. ຊື່ "ບາລະນາບາ" ແປວ່າຢ່າງໃດ? ______________________________________

**37** ຍັງເທື່ອທີ 4 ທີ່ບາລະນາບາອຸດໜູນຜູ້ອື່ນ.

ໃຫ້ອ່ານ ກຈກ 13:5 ແລະ 13



ກ. ມີອີກຄົນໜຶ່ງທີ່ເດີນທາງໄປປ່າວປະກາດພະທຳ. ນອກຈາກ ບາລະນາບາແລະໂຊໂລມີຜູ້ໃດໄປນຳເປັນຜູ້ປະຕິ ບັດ? ________________

ຂ. ຕໍ່ໄປໃນຂໍ້ 13 ເຫັນວ່າໂຢຮັນນັ້ນເຮັດຫຍັງ? ________________________________

**38** ໃຫ້ອ່ານ ກຈກ 15:36-41 ໂຢຮັນຜູ້ທີ່ປະເຂົາໄວ້ເທື່ອໜຶ່ງ ມີຊື່ອີກວ່າຢ່າງໃດ? _________

**39** ເມື່ອໂປໂລແລະບາລະນາບາຈະເດີນທາງເທື່ອທີສອງ ເຂົາບໍ່ຖືກໃຈກັນເລື່ອງໂຢຮັນມາລະໂກ.

ກ. ຮູບໃດໃນໜ້າປົກບົດທີ 22 ນີ້ ທີ່ສະແດງເຖິງການທີ່ບໍ່ຖືກໃຈກັນນັ້ນ? _____________

ຂ. ໃຜມີນ້ຳໃຈຢາກເອົາໂຢຮັນມາລະໂກໄປນຳ? ______________________________

ຄ. ຜູ້ໃດບໍ່ຢາກເອົາໄປນຳ? ___________________________________________

**40** ໃໃຫ້ອ່ານ ກຈກ 15:38 ອີກ. ເປັນຫຍັງໂປໂລບໍ່ຢາກເອົາໄປນຳ? __________________

______________________________________________________________

**41** ຕາມຄວາມຄິດຂອງໂປໂລ ເຂົາຕ້ອງການຜູ້ປະຕິບັດທີ່ເຊື່ອໃຈໄດ້ ແຕ່ທີ່ຈະໄວ້ວາງໃຈກັບໂຢຮັນມາລະໂກກໍຍາກເພາະ ເພິ່ນເຄີຍປະເຂົາໄວ້ກ່ອນ. ໂຊໂລບໍ່ເຫັນເຫດທີ່ບາລະນາບາຢາກຮັບເອົາອີກ. ແຕ່ທ່າທີຂອງບາລະນາບາເປັນທີ່ຈະເປີດ ໂອກາດໃຫ້ຜູ້ອື່ນໄດ້ປະສົບການ. ເປັນຫຍັງບາລະນາບານຳໂຊໂລມາເຖິງອັນຕີໂອເຂຍ? _________________________

______________________________________________________________

**42** ບັດນີ້ ບາລະນາບາຢາກເປີດໂອກາດໃຫ້ໂຢຮັນມາລະໂກດ້ວຍ. ຢາກເປີດ ___________ ອີກເທື່ອໜຶ່ງໃຫ້ໂຢຮັນມາລະໂກໄດ້ປະ___________ ໃນວຽກການງານຂອງພະເຈົ້າ. (ຕື່ມ)

**43** ໂຢຮັນມາລະໂກມີໂອກາດເທື່ອກ່ອນແລ້ວຕົກ. ບາລະນາບາຢາກເປີດໂອກາດໃຫ້ເປັນເທື່ອທີເທົ່າໃດ? ______________________________________________________

**44** ທີ່ໂປໂລບໍ່ຮັບເອົາໂຢຮັນມາລະໂກໄປນຳ ສະແດງວ່າບາລະນາບາຕ້ອງເລືອກວ່າຈະໄປກັບໂປໂລຫຼືກັບໂຢຮັນມາລະ ໂກ ໃນ ກຈກ 15:39 ເຫັນວ່າເພິ່ນແຍກຈາກໃຜຈຶ່ງຈະເປີດໂອກາດໃໝ່ໃຫ້ໂຢຮັນມາລະໂກໄປປ່າວປະກາດນຳ? ___________________________________

**45** ບາລະນາບາອົດທົນຫຼາຍຕໍ່ໂຢຮັນມາລະໂກ.ທີ່ເພິ່ນມີໃຈອົດທົນປານນັ້ນເພິ່ນຕ້ອງສະຫຼະຫຍັງຄາວໜຶ່ງ? (ເລືອກ)

ກ. ______ ບາລະນາບາບໍ່ສາມາດຢູ່ຮ່ວມກັບໂປໂລຄາວໜຶ່ງ

ຂ. ______ ເພິ່ນບໍ່ຢູ່ຮ່ວມກັບໂຢຮັນມາລະໂກຄາວໜຶ່ງ

ຄ. ______ ເພິ່ນບໍ່ຄືນດີກັບພະເຈົ້າຄາວໜຶ່ງ

**46** ບາລະນາບາຢາກໜຸນໃຈໂຢຮັນມາລະໂກແທ້ ດັ່ງນັ້ນ ເພິ່ນເປີດ ____________________ ເທື່ອທີ ____________ ໃຫ້ໄປປ່າວປະ ກາດ. ການໄປປະກາດກັບໂປໂລຖືວ່າເປັນສິດພິເສດ ແຕ່ເພິ່ນເຫັນວ່າທີ່ຈະເປີດໂອກາດໃໝ່ໃຫ້ໂຢຮັນມາລະໂກ ສຳ ຄັນກວ່າ. (ຕື່ມຄວາມຂາດ)

**47** ຕໍ່ໄປໃຫ້ເຫັນວ່າການເສຍສະຫຼະຂອງບາລະນາບາເກີດມີຜົນດີແທ້!

ກ. ແມ່ນຜູ້ໃດຂຽນພະທຳ 1 ເປໂຕ? ________________________________________

ໃນ 1 ເປໂຕ 5:13 ເຫັນວ່າໂຢຮັນມາລະໂກນັ້ນໃກ້ສິດກັບເປໂຕ ຈົນກວ່າເປໂຕຖືວ່າເປັນຫຍັງກັນ?________________________________________________________

ຂ. ໃຜຂຽນພະທຳ 2 ຕີໂມທຽວ? (ເບິ່ງຫົວຂໍ້ກໍໄດ້) ______________________________

ໃນ 2 ຕີໂມທຽວ 4:11 ໂປໂລບອກວ່າ ແມ່ນໃຜທີ່ເປັນປະໂຫຍດແກ່ເພິ່ນຫຼາຍ? _______

_________________________________________________________________

ຄ. ໃຜຂຽນພະທຳໂກໂລຊາຍ? ________________________________________

ໃນໂກໂລຊາຍ 4:10 ເຫັນວ່າໂປໂລຄືນດີກັບມາລະໂກແລ້ວຫຼືຍັງ? (ໃຫ້ເບິ່ງໃນວົງເລັບ)

_________________________________________________________________

**48** ເປັນຕາງຶດແທ້! ໃນກິດຈະການ ບົດທີ 15 ໂປໂລບໍ່ຍອມໄປປ່າວປະກາດພະທຳກັບໂຢຮັນມາລະໂກ ແຕ່ຕໍ່ໄປເຫັນ ຮ່ວມມືກັນກັບທັງເປໂຕແລະໂປໂລດ້ວຍ. ໃນສາຍຕາຂອງໂປໂລກາຍເປັນຂ້າໃຊ້ທີ່ເປັນປະໂຫຍດ. ເມື່ອມາລະໂກນັ້ນ ເປັນຜູ້ໃຫຍ່ແລ້ວ ເພິ່ນກໍຂຽນພະທຳຂ່າວປະເສີດທີສອງດ້ວຍ. ແມ່ນຜູ້ໃດທີ່ອຸດໜູນໂຢຮັນມາລະໂກໂດຍເປີດໂອກາດປ່າວປະກາດຫຼັງຈາກຕົກເທື່ອໜຶ່ງແລ້ວ? ______________________________________________

**49** ການຮຽນຮູ້ເລື່ອງຜູ້ລາຍງານຂ່າວປະເສີດທັງ 4 ເຫຼັ້ມ.

ກ. ຄົນໃດເຄີຍເກັບພາສີກ່ອນ? ________________________________________

ຂ. ຜູ້ໃດປະການປະກາດພະທຳຈົນບາລະນາບາເປີດໂອກາດໃໝ່? _________________

ຄ. ໃຜເປັນໝໍຢາ ທີ່ຂຽນພະທຳກິດຈະການດ້ວຍ? ______________________________

ງ. ສາວົກໃດທີ່ເປັນນ້ອງຂອງຢາໂກໂບ? __________________________________

**50** ທີ່ບາລະນາບາອຸດ ນໜູນໂຢຮັນມາລະໂກແລະຮັບເປັນຄູ່ໃນການປ່າວປະກາດມີຜົນຢ່າງໃດ? (ເລືອກ)

ກ. ______ ໂຢຮັນຕົກອີກ

ຂ. ______ ກັບໄປເຢລູຊາເລັມອີກ

ຄ. ______ ກາຍເປັນອັກຄະສາວົກ

ງ. ______ ເປັນປະໂຫຍດໃນການປ່າວປະກາດແລ້ວຂຽນພະທຳມາລະໂກ

**51** ກ. ບາລະນາບາເຮັດຫຍັງຈຶ່ງອຸດໜູນໂຢຮັນມາລະໂກ? ______________________

______________________________________________________

ຂ. ເພື່ອຈະເປີດໂອກາດໃຫ້ມາລະໂກ ບາລະນາບາສະຫຼະຫຍັງ? ________________

______________________________________________________

ຄ. ຜົນຮັບສຸດທ້າຍເປັນຢ່າງໃດ? ______________________________

______________________________________________________

*ເຊັ່ນດຽວກັນກັບພວກເຮົາຄວນມີໃຈອຸດໜູນຄົນທີ່ຕົກແລ້ວກັບໃຈໃໝ່ເໝືອນບາລະນາບາ.*

**52** ກ່ອນຈະໜຸນໃຈໂຊໂລໃນເມືອງອັນຕີໂອເຂຍ ບາລະນາບາຕ້ອງຕໍ່ສູ້ການທົດລອງໃດ? _____

______________________________________________________

**53** ກ. ບາລະນາບາຕ້ອງສະຫຼະສິດພິເສດຈຶ່ງຈະອຸດໜູນໂຢຮັນມາລະໂກໄດ້? __________

______________________________________________________

ຂ. ແຕ່ຜົນຮັບສຸດທ້າຍຝ່າຍໂຢຮັນມາລະໂກເປັນຢ່າງໃດ? ______________________

______________________________________________________

*ຄຣິດສະຕະຈັກໃດກໍຕາມຕ້ອງການຄົນທີ່ຈະອຸດໜູນຜູ້ອື່ນຢ່າງບາລະນາບາ*

- *ເພື່ອສອນແລະນຳຄຣິດສະຕຽນໃໝ່*
- *ເພື່ອຊ່ວຍໃຫ້ຄົນໜຸ່ມມີໂອກາດເປັນຜູ້ນຳຕໍ່ໄປ*
- *ເພື່ອຈະມີຄວາມອົດທົນຕໍ່ຄົນທີ່ສອນຍາກ ຫຼືຄົນທີ່ຕົກແລ້ວໃຫ້ຄືນມາໃໝ່.*

*ໃຫ້ພາກັນອ້ອນວອນຕໍ່ພະເຈົ້າທີ່ຈະມີຄົນທີ່ມີໃຈອຸດໜູນຢ່າງບາລະນາບາໃນທຸກຄຣິດສະຕະຈັກ!*

*ໃຫ້ເປີດເສັງບົດທີ 23!*

**ຄຳຕອບ:**

**1** *ກ. ບາລະນາບາ ຂ. ຜູ້ມີໃຈອຸດໜູນ*

**2** *ທີ່ຈະອຸດໜູນໝູ່ (ຄຳຄ້າຍຄືກັນກໍໄດ້)*

**3** *ກ. ເກາະກຸບໂລ ຂ. ເລວີ*

**ຄຳຕອບ (ຕໍ່):**

**4** *ເປັນຄົນທີ່ອຸດໜູນພີ່ນ້ອງ*

**5** *ຮູບ ງ*

**6** *ດາມາເຊ*

**7** *ກຸງເຢລູຊາເລັມ*

**8** *ຂ ຖືກ*

**9** *ບໍ່ເຊື່ອວ່າເພິ່ນເປັນລູກສິດ*

**10** *ກ. ບາລະນາບາ ຂ. ພວກອັກຄະສາວົກ ຄ. ພະຜູ້ເປັນເຈົ້າ ງ. ດ້ວຍໃຈກ້າ*

**11** *ກ ຖືກ*

**12** *ອັກຄະສາວົກ... ຄຼິດສະຕະຈັກ... ເຢລູຊາເລັມ*

**13** *ກ. ຄົນຕ່າງຊາດ ຂ. ເຂົາຈະບໍ່ຮັບ ຄ. ໃຊ້ບາລະນາບາໄປ*

**14** *ງ ຖືກ*

**15** *ກ. ມີແຕ່ເຊື່ອໃນພະເຢຊູ ຂ. ຮູບ ຄ*

**16** *ຄ ຖືກ*

**17** *ຂ ຖືກ*

**18** *ພິທີຕັດ*

**19** *ກ. ພາໄປຫາອັກຄະສາວົກໃນກຸງເຢລູຊາເລັມ*
*ຂ. ຍອມຮັບວ່າເຂົາເປັນຄຼິດສະຕຽນ ເຖິງບໍ່ໄດ້ເຂົ້າສາດສະໜາຢິວກໍຕາມ*
*ຄ. ຜູ້ມີໃຈອຸດໜູນ*

**20** *ກ ຂ ຄ ຈ ສ ຍ ດ ຖືກ*

**21** *ກ ຄ ຈ ຖືກ*

**22** *ຫຼາຍສົມຄວນ*

**23** *ບາລະນາບາ*

**24** *ກ. ໄປຕາໂຊເພື່ອຊອກຫາໂຊໂລ ຂ. ຮູບ ກ ຄ. ບາລະນາບາ ແລະ ໂຊໂລ*

**25** *ກ ຖືກ*

**26** *ໂອກາດ... ປະສົບການ*

**27** *ກ. ພາໂຊໂລໄປຫາເຂົາ*
*ຂ. ເພິ່ນເປີດໂອກາດໃຫ້ໂຊໂລໄດ້ປະສົບການໃນວຽກຂອງພະເຈົ້າ*

**28** *ກ. ບາລະນາບາ ກັບ ໂຊໂລ ຂ. ບາລະນາບາ ກັບ ໂຊໂລ*
*ຄ. ບາລະນາບາ ກັບ ໂຊໂລ ງ. ໂຊໂລ; ໂປໂລ ຈ. ໂປໂລ; ຂອງທ່ານ*
*ສ. ໂປໂລ ຊ. ໂປໂລ ແລະ ບາລະນາບາ*

**29** *ກ. ບາລະນາບາ ຂ. ໂປໂລ*

**30** *ກ. ບາລະນາບາ ຂ. ໂປໂລ*

**ຄຳຕອບ (ຕໍ່):**

**31** *ໂອກາດ... ສືບການ*

**32** *ກ ຖືກ*

**33** *(ຂີດຂ້າອອກ ກ ຂ ງ)*

**34** *ກ ຂ ງ ຖືກ*

**35** *ກ. ເປີດໂອກາດໃຫ້ໄດ້ປະສົບການໃນວຽກງານຂອງພະເຈົ້າ ຂ. ຜູ້ນຳ*

**36** *ກ. ຍອມຮັບວ່າເປັນພີ່ນ້ອງ ເຖິງວ່າບໍ່ໄດ້ຮັບພິທີຕັດກຳຕາມ (ເຂົາສາດສະໜາຢິວກໍໄດ້)*

*ຂ. ພາໄປຫາອັກຄະສາວົກໃນກຸງເຢລູຊາເລັມ*

*ເປີດໂອກາດໃຫ້ໄດ້ປະສົບການໃນວຽກງານຂອງພະເຈົ້າ*

*ຄ. ທົດລອງທີ່ຈະເປັນຜູ້ນຳເອງແທນທີ່ຈະອຸດໜຸນໂຊໂລ ງ. ຜູ້ມີໃຈອຸດໜຸນ*

**37** *ກ. ໂຢຮັນ ຂ. ປະເຊົາໄວ້ແລ້ວກັບເມືອຍັງກຸງເຢລູຊາເລັມ*

**38** *ມາລະໂກ*

**39** *ກ. ຮູບ ຂ ຂ. ບາລະນາບາ ຄ. ໂປໂລ*

**40** *ເພາະໂຢຮັນມາລະໂກ ປະເຊົາໄວ້ເທື່ອກ່ອນ*

**41** *ເປີດໂອກາດໃຫ້ໄດ້ປະສົບການໃນວຽກງານຂອງພະເຈົ້າ*

**42** *ໂອກາດ... ສືບການ*

**43** *ສອງ*

**44** *ແຍກຈາກໂປໂລ*

**45** *ກ ຖືກ*

**46** *ໂອກາດ... ສອງ*

**47** *ກ. ເປໂຕ ຂ. ໂປໂລ ຖືວ່າເປັນລູກ ມາລະໂກ (ຄືໂຢຮັນມາລະໂກ) ຄ. ໂປໂລ ຄືນດີກັນ*

**48** *ບາລະນາບາ*

**49** *ກ. ມັດທາຍ ຂ. ມາລະໂກ ຄ. ລູກາ ງ. ໂຢຮັນ*

**50** *ງ ຖືກ*

**51** *ກ. ເປີດໂອກາດໃຫ້ໄດ້ປະສົບການໃນວຽກງານຂອງພະເຈົ້າອີກເທື່ອໜຶ່ງ*

*ຂ. ບໍ່ໄດ້ໄປປະກາດກັບໂປໂລ*

*ຄ. ເພິ່ນຈະເລີນກ້າວໜ້າດ້ານຊີວິດຄຣິສຕຽນ ຕໍ່ໄປຮ່ວມງານກັບເປໂຕ ແລະໂປໂລ*

*ຂຽນພະທຳມາລະໂກ*

**52** *ການທົດລອງທີ່ຈະຢາກເປັນຜູ້ນຳເອົາເອງ*

**53** *ກ. ບໍ່ສາມາດເດີນທາງໄປປະກາດພະທຳກັບໂປໂລ*

*ຂ. ຮ່ວມປ່າວປະກາດກັບເປໂຕແລະໂປໂລຢ່າງເປັນປະໂຫຍດ ຂຽນພະທຳມາລະໂກ*